# ບົດຖະແຫຼງຂ່າວ

# ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

## ປະຈຳວັນຈັນ ວັນທີ 6 ກັນຍາ ປີ 2021

ສະບາຍດີ ບັນດາທ່ານທີ່ກຳລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດການຖະແຫຼງຂ່າວຂອງຄະນະສະເພາະກິດ **ປະຈຳວັນຈັນ ວັນທີ 6 ກັນຍາ ປີ 2021**, ຂ້າພະເຈົ້າ ດຣ. ຣັດຕະນະໄຊ ເພັດສຸວັນ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ.

- **ມື້ນີ້ກໍ່ເປັນວັນສຳຄັນ ທາງດ້ານສາດສະໜາ ບຸນຫໍ່ເຂົ້າປະດັບດິນ ປີນີ້ແຕກຕ່າງຈາກແຕ່ລະປີຜ່ານມາ ເພາະຊາວພຸດພວກເຮົາ ກໍ່ບໍ່ໄດ້ໄປໃສ່ບາດ, ຟັງທຳ, ວຽນທຽນ ແລະ ຄົບງັນຕາມປະເພນີ ຄືດັ່ງທີ່ຜ່ານມາ ແຕ່ຂໍສະແດງຄວາມຂອບໃຈ ທີ່ບັນດາທ່ານ ຮ່ວມແຮງຮ່ວມໃຈກັນ**

**ປະຕິບັດຕາມແຈ້ງການ ແລະ ໃຫ້ການຮ່ວມມື ເພື່ອປ້ອງກັນ ບໍ່ໃຫ້ຕິດເຊື້ອໃນຊຸມຊົນເປັນວົງກວ້າງ.**

- ຕໍ່ໄປ ຂ້າພະເຈົ້າ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ໃນ ສປປ ລາວ, ໃນໂລກ ແລະ ບາງຂໍ້ແນະນຳເພີ່ມເຕີມ.

❖ **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 5 ກັນຍາ 2021:**

- ໄດ້ກວດວິເຄາະທັງໝົດ **2,479** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **125** ຄົນເຊິ່ງ **ຕິດເຊື້ອໃນຊຸມຊົນ 50 ຄົນ** ເປັນຜູ້ສຳຜັດໃກ້ຊິດນຳຜູ້ຕິດເຊື້ອທີ່ຜ່ານມາ ແລະ **ກໍລະນີນຳເຂົ້າ ມີ 75 ຄົນ** ຈາກ ສະຫວັນນະເຂດ 46 ຄົນ, ຈຳປາສັກ 15 ຄົນ, ສາລະວັນ

6 ຄົນ, ນະຄອນຫຼວງວຽງຈັນ 4 ຄົນ ແລະ ຄໍາມ່ວນ 4 ຄົນ. ເຊິ່ງກວດພົບຈາກແຮງງານ ລາວ ຫຼື ຜູ້ທີ່ເດີນທາງມາຈາກປະເທດເພື່ອນບ້ານ ເຂົ້າຕາມຈຸດຜ່ານແດນສາກົນ.

**ລາຍລະອຽດ ຜູ້ຕິດເຊື້ອໃນຊຸມຊົນ ຢູ່ບັນດາແຂວງ ເຊິ່ງແມ່ນເປັນຜູ້ສໍາຜັດໃກ້ຊິດກັບຜູ້ ຕິດເຊື້ອທີ່ຜ່ານມາ ລາຍລະອຽດດັ່ງນີ້:**

- **ຈໍາປາສັກ 16 ຄົນ:** ທັງໝົດແມ່ນ ຈຸ້ມຂອງເມືອງ ປະທຸມພອນ, ໃນນັ້ນ ຈາກບ້ານສ້າງ ທ່ຽງ ນະຄອນປາກເຊ 1 ຄົນ
- **ຄໍາມ່ວນ 15 ຄົນ**:

  - 14 ຄົນ (8 ຄົນ ຈາກຕະຫລາດຫຼັກ 2 ແລະ 6 ຄົນ ຈາກຕະຫລາດຫຼັກ 3)
  - 1 ຄົນ ແມ່ນເຈົ້າໜ້າທີ່ຕໍາຫລວດ ຄ້າຍຄຸມຂັງ

- **ສະຫວັນນະເຂດ 8 ຄົນ:**

  - ເປັນພະນັກງານແພດປະຈຳຢູ່ສູນຫຼັກ 9 ຈຳນວນ 04 ຄົນ ເຂົ້າມາປະຈຳການວັນທີ 24 ສິງຫາ 2021 ເຊິ່ງເປັນທີມແພດ ມາຈາກເມືອງອາດສະພັງທອງ, (ທ່ານໝໍ 01 ຄົນ ແລະ ພະຍາບານ 02 ຄົນ) ແລະ ພະຍາບານຈາກ ເມືອງພິນ 01 ຄົນ.

  - 04 ຄົນ ເຊິ່ງເປັນທີມງານແພດຈາກໂຮງໝໍສູນກາງ ທີ່ລົງໄປຊ່ວຍວຽກ ຢູ່ສະຖານທີ່ກຸມຂັງ ແຂວງສະຫວັນະເຂດ

- **ບໍ່ແກ້ວ 8 ຄົນ**: ມາຈາກ ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ (ຈີນ 6 ຄົນ, ພະມ້າ 01 ຄົນ ແລະ ລາວ 01 ຄົນ).

- **ສາລະວັນ 2 ຄົນ**: ລູກຊາຍຝາແຝດ ຊຶ່ງພໍ່ ແລະ ແມ່ຕິດເຊື້ອ ເປັນພະນັກງານໄອຍະການ ແຂວງສາລະວັນ ທີ່ໄດ້ລາຍງານໃນວັນທີ 5 ກັນຍາ 2021.

- **ຫຼວງພະບາງ 1 ຄົນ:** ເປັນເພດຊາຍ, ອາຊີບ: ກຳມະກອນກໍ່ສ້າງທາງລົດໄຟ ຊຶ່ງຜູ້ກ່ຽວເດີນທາງມາຈາກເມືອງນາຊາຍທອງ, ນະຄອນຫລວງວຽງຈັນ ເດີນທາງກັບໄປຫລວງພະບາງ ແລ້ວຖືກນຳສົ່ງເຂົ້າສູນຈຳກັດບໍລິເວນ ທີ່ທາງແຂວງໄດ້ກຳນົດໄວ້.

- ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ສະຖານທີ່ປິ່ນປົວທີ່ຖືກກຳນົດໄວ້.
- ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **16,058 ຄົນ**, ເສຍຊີວິດສະສົມ **16** ຄົນ ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **5,394** ຄົນ.

- ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19 ສຳລັບ ນະຄອນຫຼວງວຽງຈັນນີ້ແມ່ນ ຢູ່**ຈຸດເກັບຕົວຢ່າງບຶງຂະຫຍອງ** ເຊິ່ງເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ ຫາ ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີລາຍງານຄົນເຈັບຕິດເຊື້ອ.
- ສຳລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼືສະຖານທີ່ທີ່ກຳນົດໄວ້.

## ➢ ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ

- ວັນທີ 5 ກັນຍາ 2021 ມີຜູ້ເດີນທາງຜ່ານເຂົ້າມາດ່ານຕ່າງໆໃນ ສປປ ລາວ ຈຳນວນ ທັງໝົດ **1,900** ຄົນ.
- ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **89** ສູນ ແລະ **54** ໂຮງແຮມ, ມີຜູ້ຈຳກັດບໍລິເວນ **8,272** ຄົນ.

## ➢ ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ **221.513.567** (440.538ໃໝ່), ເສຍຊີວິດທັງໝົດ **4.581.218** (6.842 ໃໝ່), ປິ່ນປົວຫາຍດີ **198.004.433** (441.794ໃໝ່). ສຳລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ

ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ ສະຫະລັດອາເມລິກາ, ອິນເດຍ ແລະ ບຣາຊິວ.

- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

  - ປະເທດ ໄທ ມີຜູ້ຕິດເຊື້ອ 15,452 ແລະ ເສຍຊີວິດໃນມື້ດຽວ 224 ຄົນ, ຮອງລົງມາ ແມ່ນ ຫວຽດນາມມີລາຍງານຜູ້ຕິດເຊື້ອໃໝ່ປະຈຳວັນ 13,137 ຄົນ ແລະ ເສຍຊີວິດໃນມື້ດຽວ 281 ຄົນ.

**ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ.**

- ສະພາບການລະບາດຂອງພະຍາດນີ້ ທັງໃນທົ່ວໂລກ, ບັນດາປະເທດໃກ້ຄຽງ ແລະ ໃນປະເທດເຮົາ ແມ່ນຍັງບໍ່ທັນມີທ່າອ່ຽງທີ່ຈະຄົງທີ່ ຫຼື ຫຼຸດລົງເທື່ອ. ດັ່ງທີ່ພວກເຮົາ ເຫັນໄດ້ຈາກຕົວເລກທີ່ຫຼາຍແຂວງມີລາຍງານການລະບາດໃນຊຸມຊົນເພີ່ມຂຶ້ນ;

- ໃນໄລຍະອາທິດທີ່ຜ່ານມາ ເຫັນວ່າ ຕົວເລກການຕິດເຊື້ອ ໃນພະນັກງານດ່ານໜ້າ ແມ່ນເພີ່ມຂຶ້ນຫຼາຍພໍສົມຄວນ ເຊິ່ງສົ່ງຜົນກະທົບຕໍ່ພະນັກງານສາທາລະນະສຸກ, ພະຍາບານ, ທະຫານ, ຕຳຫຼວດ ທີ່ມີຈຳນວນຈຳກັດຢູ່ແລ້ວ ແລະ ກໍ່ຍັງຕ້ອງໄດ້ສືບຕໍ່ປະຕິບັດໜ້າທີ່ ເພື່ອຮັບໃຊ້ປະຊາຊົນບັນດາເຜົ່າ ໃນສະພາວະທີ່ຫຍຸ້ງຍາກ. ໃນຈຳນວນຕົວເລກລາຍງານການຕິດເຊື້ອໃໝ່ໃນແຕ່ລະວັນນັ້ນ ກໍ່ຍັງພົບເຫັນວ່າ ການຮັບວັກຊີນ ກໍ່ບໍ່ທັນຄົບ ຫຼື ບໍ່ທັນໄດ້ຮັບເທື່ອ. ນອກຈາກນັ້ນ ການປ້ອງກັນຕົນເອງ ໃນສະຖານທີ່ເຮັດວຽກ, ສະຖານທີ່ຈຳກັດບໍລິເວນ, ດ່ານເຂົ້າ-ອອກ, ໂຮງໝໍພາກສະໜາມ... ກໍ່ຍັງບໍ່ທັນໄດ້ປະຕິບັດຢ່າງເຂັ້ມງວດ ຕາມຂໍ້ແນະນຳທາງດ້ານວິຊາການ ຈຶ່ງເຮັດໃຫ້ມີການຕິດເຊື້ອເກີດຂຶ້ນ;
- ປັດຈຸບັນ ສັງຄົມໃຫ້ຄວາມສົນໃຈຫຼາຍ ກ່ຽວກັບ ການສັກວັກຊີນເຂັມ 3 (Booster). ຕໍ່ບັນຫາດັ່ງກ່າວ, ຍັງບໍ່ທັນມີຫຼັກຖານຢັ້ງຢືນ ທາງດ້ານວິທະຍາສາດ ຈາກອົງການອະນາໄມໂລກ

ກໍ່ຄື ນະໂຍບາຍຂອງກະຊວງສາທາລະນະສຸກ ວ່າ ມັນສາມາດກະຕຸ້ນພູມຄຸ້ມກັນເພີ່ມຂຶ້ນໄດ້ ດັ່ງທີ່ຖືກຍົກຂຶ້ນໃນສື່ສັງຄົມອອນລາຍ. ແຕ່ເຖິງຢ່າງໃດກໍ່ຕາມ, ພັກ-ລັດຖະບານ ກໍ່ຄື ກະຊວງສາທາລະນະສຸກ ແມ່ນໄດ້ ຕິດຕາມຢ່າງໃກ້ຊິດ ແລະ ມອບໝາຍໃຫ້ທີມງານວິຊາການ ໂດຍສົມທົບກັບອົງການອະນາໄມໂລກ ຄົ້ນຄວ້າ, ສັງລວມຂໍ້ມູນ ກ່ຽວກັບ ການສັກວັກຊີນເຂັມທີ 3 ລວມທັງ ການສັກວັກຊີນໃນກຸ່ມອາຍຸຕໍ່າກວ່າ 18 ປີ ລວມທັງ ການສັກວັກຊີນຊະນິດໄຂ່ວຊະນິດກັນ ເພື່ອນໍາສະເໜີໃຫ້ແກ່ກອງປະຊຸມຄະນະສະເພາະກິດ ເປັນບ່ອນອີງໃນການຕັດສິນວາງມາດຕະການໃນຕໍ່ໜ້າ. ປັດຈຸບັນ ພວກເຮົາໄດ້ຮັບລາຍງານ ວ່າມີກຸ່ມຄົນຈໍານວນໜຶ່ງ ທີ່ພະຍາຍາມໄປຈຸດບໍລິການສັກວັກຊີນ ເພື່ອສັກເຂັມທີ 3 ເຊິ່ງພວກເຮົາໄດ້ມີການກວດກາຢ່າງເຄັ່ງຄັດ ແລະ ຖືວ່າ ການກະທໍາດັ່ງກ່າວ ຜິດຕໍ່ລະບຽບຫຼັກການ ຈຶ່ງແຈ້ງມາຍັງບັນດາທ່ານວ່າການສັກວັກຊີນຄົບໂດສ ຍັງມີປະສິດທິພາບ ແລະ ປະສິດທິຜົນສູງ;

- ໃນໄລຍະນີ້, ສັງເກດເຫັນວ່າ ປະຊາຊົນ ຈຳນວນຫຼາຍ ໃຫ້ຄວາມສົນໃຈຕໍ່ການດູແລສຸຂະພາບຕົນເອງ ໂດຍການອອກກຳລັງກາຍຢູ່ສວນສາທາລະນະຕ່າງໆ, ພ້ອມດຽວກັນນັ້ນ ຫຼາຍທ່ານກໍ່ໃສ່ຜ້າປິດປາກ-ດັງ ໃນເວລາອອກກຳລັງກາຍ. ສະນັ້ນ, ຂ້າພະເຈົ້າ ຈຶ່ງມີຂໍ້ແນະນຳໃນການປະຕິບັດການປ້ອງກັນຕົນເອງ ໃນໄລຍະທີ່ທ່ານອອກກຳລັງກາຍ ດັ່ງຕໍ່ໄປນີ້:

  \- ການໃສ່ຜ້າປິດປາກ-ດັງ ກໍ່ເປັນວິທີປ້ອງກັນການຕົນເອງທີ່ດີ ແຕ່ວ່າ ໃນເວລາອອກກຳລັງກາຍ ຮ່າງກາຍຈະຕ້ອງການອາກາດຫາຍໃຈເພີ່ມຂຶ້ນ. ສະນັ້ນ ໃນເວລາອອກກຳລັງກາຍ ເຫື່ອຈະຖືກຂັບອອກຫຼາຍ ຈຶ່ງບໍ່ຄວນໃສ່ຜ້າປິດປາກ-ດັງ ເພາະຈະເຮັດໃຫ້ທ່ານຫາຍໃຈບໍ່ສະດວກ. ຈຶ່ງແນະນຳໃຫ້ທ່ານຮັກສາໄລຍະຫ່າງຢ່າງໜ້ອຍ 2 ແມັດຂຶ້ນໄປ ເວລາອອກກຳລັງກາຍ.

ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈຳວັນຈັນ ວັນທີ 6 ກັນຍາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້. ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານທີ່ຕິດຕາມຊົມ ແລະ ຮັບຟັງ (ຂອບໃຈ)